# ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

## ບົດສະຫຼຸບການເຄື່ອນໄຫວທຸລະກິດ ປະຈຳປີ 2017

www.bcel.com.la

## 1. ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ດຳເນີນທຸລະກິດໃນຮູບແບບມະຫາຊົນ ແລະ ຈົດທະບຽນຢູ່ໃນຕະຫຼາດຫຼັກຊັບ ສປປ ລາວ.

ທະນາຄານການຄ້າຕ່າງປະເທດລາວ ເຊິ່ງໄດ້ຮັບການສ້າງຕັ້ງຂຶ້ນພາຍໃຕ້ໃບອະນຸຍາດສ້າງຕັ້ງທະນາຄານ ເລກທີ 129/ທຫລ, ລົງວັນທີ 01 ພະຈິກ 1989, ໃນວັນທີ 23 ທັນວາ 2010 ທະນາຄານໄດ້ສຳເລັດການຂາຍຮຸ້ນອອກສູ່ມະຫາຊົນ. ທະນາຄານໄດ້ປ່ຽນຊື່ມາເປັນ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ອີງຕາມໃບທະບຽນວິສາຫະກິດ ເລກທີ 0061/ທຈທ, ລົງວັນທີ 10 ມັງກອນ 2011 ອອກໂດຍກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ ຂອງ ສປປ ລາວ. ພ້ອມດຽວກັນນັ້ນ, ກະຊວງການເງິນໄດ້ຕາງໜ້າໃຫ້ລັດຖະບານເປັນຜູ້ຖືຮຸ້ນໃຫຍ່ສຸດໂດຍຖືຮຸ້ນ 80% ຂອງຮຸ້ນທັງໝົດ.

ວັນທີ 15 ກໍລະກົດ 2011, ກະຊວງການເງິນ ຂາຍຮຸ້ນສາມັນ 10% ໃຫ້ຄູ່ຮ່ວມຍຸດທະສາດ ຊື່ວ່າ ທະນາຄານ COFIBRED ອີງຕາມສັນຍາການຊື້-ຂາຍຮຸ້ນສາມັນ ລະຫວ່າງ ກະຊວງການເງິນ ແລະ ທະນາຄານ COFIBRED.

ປະຈຸບັນ ໂຄງສ້າງການຖືຮຸ້ນຂອງທະນາຄານ: ລັດຖະບານຖືຮຸ້ນ 70%, ຮຸ້ນຂອງນັກລົງທຶນພາຍໃນ (ລວມທັງພະນັກງານ ທຄຕລ) ແລະ ນັກລົງທຶນຕ່າງປະເທດ 20% ແລະ ຄູ່ຮ່ວມຍຸດທະສາດ 10%.

ໃນວັນທີ 17 ສິງຫາ 2017, ສຳນັກງານ ຄະນະກຳມະການຄຸ້ມຄອງຫຼັກຊັບໄດ້ອະນຸມັດໃຫ້ ທຄຕລ ເພີ່ມທຶນໂດຍການສະເໜີຂາຍຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມ ໃຫ້ແກ່ສາທະລະນະຊົນໃນຕະຫຼາດຫຼັກຊັບລາວເພື່ອເພີ້ມທຶນຈົດທະບຽນ. ທະນາຄານໄດ້ຮັບໃບສ້າງຕັ້ງສະບັບໃໝ່ ເລກທີ 21/ທຫລ, ລົງວັນທີ 13 ກັນຍາ 2017 ອອກໂດຍທະນາຄານແຫ່ງ ສປປ ລາວ. ໃນວັນທີ 15 ກັນຍາ 2017 ຕະຫຼາດຫຼັກຊັບລາວໄດ້ຢັ້ງຢືນວ່າທະນາຄານໄດ້ເພີ້ມທຶນຈົດທະບຽນຈຳນວນ 355.728.500.000 ກີບ (71.145.700 ຮຸ້ນ) ຕາມໃບຢັ້ງຢືນເລກທີ 01 /ຕລຊລ, ລົງວັນທີ 15 ກັນຍາ 2017 ແລະ ໃບທະບຽນວິສາຫະກິດສະບັບປັບປຸງໃຫມ່ ເລກທີ 0889/ERO, ລົງວັນທີ 15 ກັນຍາ 2017 ອອກໂດຍ ກະຊວງອຸດສາຫະກຳ ແລະ ການຄ້າ.

ກິດຈະກຳຫລັກຂອງທະນາຄານ ແມ່ນເພື່ອສະໜອງການບໍລິການ ລວມທັງການລະດົມທຶນ ແລະ ຮັບຝາກເງິນໄລຍະສັ້ນ, ກາງ ແລະ ຍາວ ຈາກອົງກອນ ແລະ ບຸກຄົນ; ເງິນກູ້ໄລຍະສັ້ນ, ກາງ, ຍາວ ໃຫ້ແກ່ຫົວໜ່ວຍທຸລະກິດ ແລະ ບຸກຄົນຕາມຈຸດປະສົງ ແລະ ຄວາມສາມາດໃນການສະໜອງທຶນຂອງທະນາຄານ; ບໍລິການແລກປ່ຽນເງິນຕາຕ່າງປະເທດ, ບໍລິການຊຳລະສະສາງ, ການບໍລິການການຄ້າລະຫວ່າງປະເທດ, ບໍລິການໜັງສືສິນເຊື່ອ, ຄ້ຳປະກັນ, ໃຫ້ບໍລິການຊື້ຂາຍວັດຖຸມີຄ່າອື່ນໆ ແລະ ໃຫ້ບໍລິການດ້ານທະນາຄານອື່ນໆ ທີ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ ໂດຍສະເພາະແມ່ນບໍລິການດ້ານປະກັນໄພ, ບໍລິການເປັນນາຍໜ້າຊື້ຂາຍຫຼັກຊັບເປັນຕົ້ນ.

**ທຶນຈົດທະບຽນ**

ທຶນຈົດທະບຽນ ນະວັນທີ 31 ທັນວາ 2017 ແມ່ນ 1.038.617 ລ້ານກີບ (ນະວັນທີ 31 ທັນວາ 2016 : 682.888 ລ້ານກີບ)

**ທີ່ຕັ້ງ ແລະ ເຄືອຂ່າຍ**

ສໍານັກງານໃຫຍ່ຂອງທະນາຄານ ຕັ້ງຢູ່ເລກທີ 01, ຖະໜົນປາງຄໍາ, ບ້ານຊຽງຍືນ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ. ນະວັນທີ 31 ທັນວາ 2017 ທະນາຄານມີ (1) ສໍານັກງານໃຫຍ່, ໜຶ່ງ (1) ບໍລິສັດໃນເຄືອ, (4) ບໍລິສັດຮ່ວມທຶນ, (19) ສາຂາຫລັກ, (85) ໜ່ວຍບໍລິການ ແລະ (16) ຫ້ອງແລກປ່ຽນເງິນຕາທົ່ວ ສປປ ລາວ.

## 2. ວິໃສທັດ

ທຄຕລ ໄດ້ຮັບການປັບປຸງວິໄສທັດຂອງຕົນຄືນໃໝ່ ເພື່ອປະກອບເຂົ້າໃນການພັດທະນາວຽກງານຂອງຕົນໃຫ້ບັນລຸຕາມເປົ້າໝາຍ ແລະ ວັດຖຸປະສົງຄື: ເປັນທະນາຄານທີ່ເຂັ້ມແຂງ ທັນສະໄໝ ກ້າວສູ່ມາດຕະຖານສາກົນ.

## 3. ພາລະກິດ

ເພື່ອເຮັດໃຫ້ ທຄຕລ ກາຍເປັນທະນາຄານທີ່ເຂັ້ມແຂງ ທັນສະໄໝ ແລະ ກ້າວສູ່ມາດຕະຖານສາກົນ, ພາລະກິດທີ່ສໍາຄັນຂອງ ທຄຕລ ມີຄື: ພັດທະນາລະບົບບໍລິຫານອົງກອນທີ່ເຂັ້ມແຂງ ເນັ້ນການປັບປຸງທຸລະກິດທະນາຄານໃຫ້ແທດເໝາະກັບສະພາບການປ່ຽນແປງໃນໄລຍະໃໝ່ ຖືເອົາການສ້າງວັດທະນະທໍາຄຸ້ມຄອງບໍລິຫານຄວາມສ່ຽງໃຫ້ເຂັ້ມແຂງ ແລະ ສອດຄ່ອງຕາມຫລັກການ Basel II, ຍົກສູງປະສິດທິພາບການດໍາເນີນທຸລະກິດ, ສ້າງ ແລະ ພັດທະນາລະບົບຂໍ້ມູນຂ່າວສານບໍລິຫານທີ່ມີສັກກາຍະພາບ, ຄົບຖ້ວນ, ຖືກຕ້ອງ ແລະ ທັນເວລາ, ໄດ້ມາດຕະຖານສາກົນ ທາງດ້ານລະບົບລາຍງານ, ນໍາໃຊ້ລະບົບເທັກໂນໂລຊີທີ່ທັນສະໄໝ ແລະ ຍົກລະດັບຄວາມຮູ້, ຄວາມຊ່ຽວຊານສະເພາະດ້ານໃຫ້ເທົ່າທຽມກັບພາກພື້ນ ແລະ ສາກົນ.

- **ເປົ້າໝາຍການດໍາເນີນງານ 2017**

ເພື່ອກຽມຄວາມພ້ອມ ຮອງຮັບການຈັດຕັ້ງຜັນຂະຫຍາຍພາລະກິດໄລຍະຍາວ ທຄຕລ ຈໍາເປັນຕ້ອງໄດ້ພັດທະນາບັນດາພື້ນຖານໂຄງສ້າງການຈັດຕັ້ງໃຫ້ສອດຄ່ອງ, ພັດທະນາເຄື່ອງມືຮອບດ້ານ ແລະ ປັບປຸງປັດໃຈພື້ນຖານອື່ນໆ ເພື່ອອໍານວຍຄວາມສະດວກໃຫ້ແກ່ການການປັບປຸງບໍລິການ, ສ້າງຄວາມເຂັ້ມແຂງດ້ານການເງິນ, ການຄຸ້ມຄອງບໍລິຫານທີ່ດີເລີດ. ໃນການຄຸ້ມຄອງບໍລິຫານທີ່ດີເລີດ ການຈັດວາງສັບຊ້ອນໂຄງສ້າງ ແລະ ກົງຈັກການຈັດຕັ້ງ ແມ່ນຈໍາເປັນຕ້ອງໄດ້ປັບປຸງຄືນໃໝ່ ເຊັ່ນ: ນໍາສະເໜີສ້າງຕັ້ງພະແນກການຕະຫຼາດຄືນໃໝ່, ຄົ້ນຄ້ວາສ້າງຕັ້ງສາຂາ ຢູ່ນະຄອນຫລວງວຽງຈັນ, ໜ່ວຍບໍລິການເພີ່ມຕື່ມ ທີ່ເຫັນວ່າມີຄວາມເໝາະສົມ, ປັບປຸງລະບຽບການຄຸ້ມຄອງບໍລິຫານພາຍໃນໃຫ້ສອດຄ່ອງກັບບັນດານິຕິກໍາສະບັບປັບປຸງ ແລະ ເພີ່ມຕື່ມໃໝ່, ການປັບປຸງພາລະບົດບາດຂອງສະພາບໍລິຫານໃຫ້ສອດຄ່ອງ CG.

## 4. ກົງຈັກການຈັດຕັ້ງ.

4.1 ໂຄງຮ່າງການຈັດຕັ້ງ ທຄຕລ: ປະກອບດ້ວຍສະພາບໍລິຫານ ຈຳນວນ 7 ທ່ານ, ຄະນະອຳນວຍການຈຳນວນ 7 ທ່ານ, ມີ 11 ພະແນກ, 3 ສູນ, 19 ສາຂາ, 85 ໜ່ວຍບໍລິການ ແລະ 16 ຫ້ອງແລກປ່ຽນເງິນຕາທົ່ວປະເທດ.

### ຄະນະສະພາບໍລິຫານ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ



## ຄະນະອຳນວຍການ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ



ທ່ານ ພູຂົງ ຈັນທະຈັກ
ຜູ້ອຳນວຍການໃຫຍ່



ທ່ານ ພັນຊະນະ ຄຸນນຸວົງ
ຮອງ ຜູ້ອຳນວຍການ



ທ່ານ ລາໃຈ ຄັນພະວົງສ໌
ຮອງ ຜູ້ອຳນວຍການ



ທ່ານ ມັນທະລາດ ແກ້ວປະເສີດ
ຮອງ ຜູ້ອຳນວຍການ



ທ່ານ ຄຳຊ່ຽນ ມິ່ງບຸບຜາ
ຮອງ ຜູ້ອຳນວຍການ



ທ່ານ ສຸພັກ ຖິ່ນໄຊພອນ
ຮອງ ຜູ້ອຳນວຍການ



ທ່ານ ບົວວັນ ສີມະລີວົງ
ຮອງ ຜູ້ອຳນວຍການ

## 5. ການຈັດຕັ້ງປະຕິບັດພາລະກິດ ປະຈຳ ປີ 2017.

ໃນປີ 2017 ທີ່ຜ່ານມານີ້ ທຄຕລ ສາມາດປະຕິບັດວຽກງານໄດ້ຫຼາຍດ້ານ ເຊັ່ນ: ສຳເລັດການປິດສະຫຼຸບບັນຊີທ້າຍປີ 2017, ຈັດກອງປະຊຸມທົບທວນຜົນການດຳເນີນທຸລະກິດຂອງ ທຄຕລ ປະຈຳປີ 2016 ແລະ ປະຈຳໄຕມາດ ທັງໝົດ 03 ຄັ້ງ ແລະ ກອງປະຊຸມສະພາບໍລິຫານ 3 ຄັ້ງ, ກອງປະຊຸມຜູ້ຖືຮຸ້ນສະໄໝສາມັນ ປະຈຳປີ 2016 ເພື່ອຮັບຮອງເອົາບັນຫາສຳຄັນຕ່າງໆ ພ້ອມກັບການຈ່າຍເງິນປັນຜົນໃຫ້ແກ່ ຜູ້ຖືຮຸ້ນ ປະຈຳປີ 2016 ຈຳນວນ 614 ກີບ/ຮຸ້ນ.

ທຄຕລ ໄດ້ສຳເລັດການຄັດເລືອກ ແລະ ຮັບເອົາທີ່ປຶກສາດ້ານການເງິນ, ທີ່ປຶກສາດ້ານກົດໝາຍ ແລະ ຜູ້ຄ້ຳປະກັນການຂາຍຮຸ້ນເພື່ອອອກຮຸ້ນສາມັນເພີ່ມທຶນຈຳນວນ 360 ຕື້ກີບ ແລະ ໄດ້ສຳເລັດການຂາຍຮຸ້ນເພີ່ມທຶນໃຫ້ ທຄຕລ, ດຳເນີນໂຄງການບາເຊວ 2 ພ້ອມທັງດຳເນີນການປະເມີນສ່ວນຕ່າງຂອງຄວາມສ່ຽງທຸກດ້ານຕາມຫຼັກການບາ ເຊວ 2, ການກວດກາຮ່າງລາຍງານການວິເຄາະຊ່ອງຫວ່າງຄວາມສ່ຽງດ້ານ ICAAP ແລະ ໄດ້ສຳເລັດໂຄງການພື້ນຖານ: ວິເຄາະເຫັນຊ່ອງຫວ່າງຄວາມສ່ຽງດ້ານຕ່າງໆ, ສ້າງແຜນດຳເນີນງານ (ROADMAP) ຂອງໂຄງການບາວເຊວ 2 ແລະ ປິດຊ່ອງຫວ່າງຄວາມສ່ຽງທີ່ພົບເຫັນ, ໄດ້ຄົ້ນຄວ້ານຳສະເໜີ ທະນາຄານແຫ່ງ ສປປ ລາວ (ທຫລ) ສ້າງຕັ້ງພະແນກການຕະຫຼາດຄືນໃໝ່, ການໂຮມພະແນກຄຸ້ມຄອງສາຂາເຂົ້າກັບພະແນກກວດກາພາຍໃນເປັນພະແນກກວດກາພາຍໃນ ແລະ ສ້າງຕັ້ງສາຂາໃໝ່ຢູ່ເມືອງໄຊເສດຖາ.

ທຄຕລ ໄດ້ດໍາເນີນການເປີດເຜີຍຜົນການກວດສອບຖານະການເງິນ ທຄຕລ ປະຈໍາປີ 2016 ແລະ ເປີດເຜີຍລາຍງານການເຄື່ອນໄຫວ ແລະ ຜົນການທົບທວນຖານະການເງິນຂອງ ທຄຕລ ໄຕມາດ 01/2017 ແລະ ປະຈໍາ 6 ເດືອນ, 9 ເດືອນ ປີ 2017 ຜ່ານລະບົບເປີດເຜີຍຂອງບໍລິສັດຕະຫຼາດຫຼັກຊັບລາວ. ດໍາເນີນໂຄງການສ້າງໂປຼແກຣມສິນເຊື່ອແບບໃໝ່ ປະຈຸບັນແມ່ນຢູ່ໃນຂັ້ນຕອນການສະໜອງຂໍ້ມູນຂອງພະແນກການທີ່ກ່ຽວຂ້ອງໃຫ້ແກ່ບໍລິສັດທີ່ປຶກສາ. ນອກຈາກນັ້ນ, ທຄຕລ ຍັງໄດ້ດໍາເນີນການເຜີຍແຜ່ແຜນຍຸດທະສາດໄລຍະຍາວ 2016-2020 ແລະ ແຜນການປີ 2017 ໃຫ້ແກ່ສາຂາ ທຄຕລ ທົ່ວລະບົບ ເພື່ອໃຫ້ສາຂາຮັບຊາບບັນດາທິດທາງແຜນການ ແລະ ຜັນຂະຫຍາຍໄປສູ່ການຈັດຕັ້ງປະຕິບັດໃຫ້ບັນລຸແຜນການຕ່າງໆ. ໄດ້ຄົ້ນຄວ້າປັບປຸງ **Job Description** ແລະ ກໍານົດຕົວຊີ້ວັດການດໍາເນີນງານຂອງພະນັກງານສໍາເລັດ ໂດຍພື້ນຖານ 4 ພາກສ່ວນ (ພະແນກຈັດຕັ້ງ ແລະ ພະນັກງານ, ພະແນກຄົ້ນຄວ້າ, ພັດທະນາ ແລະ ການຕະຫຼາດ, ພະແນກຄຸ້ມຄອງສິນເຊື່ອ ແລະ ສູນບໍລິການ) ເພື່ອນໍາສະເໜີຮັບຮອງ ແລະ ເປັນການຈັດຕັ້ງປະຕິບັດທົດລອງກ່ອນ. ດໍາເນີນໂຄງການສ້າງປື້ມແນະນໍາ ທຄຕລ (BCEL Profile) ສະບັບພາສາລາວ ແລະ ອັງກິດ ແລະ ການນໍາໃຊ້ແຊັກຮູບແບບໃໝ່ຂອງ ທຄຕລ.

ທຄຕລ ໄດ້ຂະຫຍາຍວຽກງານບໍລິການ ຮ່ວມມືກັບພາກສ່ວນອື່ນໆ ເຊັ່ນ: ຈັດພິທີລົງນາມວ່າດ້ວຍການຮ່ວມມືດ້ານບໍລິການທະນາຄານ ລະຫວ່າງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ແລະ ທະນາຄານແຫ່ງປະເທດຈີນ ຈໍາກັດ, ເຊັນສັນຍາວ່າດ້ວຍການບໍລິການທີ່ປຶກສາທາງດ້ານການເງິນ ລະຫວ່າງ ທຄຕລ ແລະ ບໍລິສັດຫຼັກຊັບລາວ-ຈີນ ຈໍາກັດ, ລົງນາມວ່າດ້ວຍການຊໍາລະຄ່າບໍລິການຕ່າງໆຜ່ານ ທຄຕລ ລະຫວ່າງ ທຄຕລ ກັບ ບໍລິສັດກຸງສີ ບໍລິການເຊົ່າສິນເຊື່ອຈໍາກັດ, ບໍລິສັດ AEON ເຊົ່າສິນເຊື່ອລາວ, ບໍລິສັດໄທເອັດ ເຊົ່າສິນເຊື່ອ (ລາວ), ສະຖາບັນການເງິນຈຸລະພາກທີ່ຮັບຝາກເງິນປະຕູຄໍາ ແລະ ບໍລິສັດເມືອງໄທປະກັນຊີວິດ, ສໍາເລັດການເຊັນບົດບັນທຶກຄວາມເຂົ້າໃຈ ວ່າດ້ວຍການຮ່ວມມືດ້ານການບໍລິການທະນາຄານ ລະຫວ່າງ ທຄຕລ ກັບ ທະນາຄານ KEB Hana ຈາກ ສ. ເກົາຫຼີ.

ໄດ້ສໍາເລັດການຈັດພິທີລົງນາມຮ່ວມມືລະຫວ່າງກົມສ່ວຍສາອາກອນ ແລະ ທຄຕລ ວ່າດ້ວຍການເປີດນໍາໃຊ້ລະບົບທັນສະໄໝເສຍຄ່າທໍານຽມທາງ, ສໍາເລັດການພັດທະນາການຊໍາລະຊື້-ຂາຍສິນຄ້າແບບທັນສະໄໝຜ່ານ QR Code ຫຼື One Play ທີ່ເປັນສ່ວນໜຶ່ງຂອງຜະລິດຕະພັນ BCEL One, ປະຈຸບັນແມ່ນໄດ້ດໍາເນີນການຕິດຕັ້ງການນໍາໃຊ້ໃຫ້ກັບບັນດາຮ້ານຄ້າຍ່ອຍ ຢູ່ໃນນະຄອນຫຼວງວຽງຈັນ ແລະ ສາຂາ ທຄຕລ ທົ່ວປະເທດ. ພ້ອມກັນນັ້ນ, ກໍ່ຈັດງານໃຫ້ບໍລິການ ແລະ ສົ່ງເສີມການນໍາໃຊ້ One Pay (ການຊໍາລະສະສາງສິນຄ້າດ້ວຍການສະແກນ QR Code) ທີ່ສູນການຄ້າລາວໄອເຕັກ.

ໃນປີ 2017 ທຄຕລ ກໍ່ໄດ້ຂະຫຍາຍຕາໜ່າງບໍລິການທັງໝົດ 5 ໜ່ວຍບໍລິການຄື: ໜ່ວຍບໍລິການຫ້ວຍຫົງ, ໜ່ວຍບໍລິການດົງຈອງ (ປໍ້ານໍ້າມັນ ປຕທ), ຍົກລະດັບໜ່ວຍບໍລິການນໍ້າພຸ, ໜ່ວຍບໍລິການຫລັກ 35 ສາຂາສະຫວັນນະເຂດ ແລະ ໜ່ວຍບໍລິການຊຽງເງິນ ສາຂາຫຼວງພະບາງ. ນອກຈາກນັ້ນ, ກໍ່ຈັດພິທີເປີດນໍາໃຊ້ອາຄານຫຼັງໃໝ່ ຂອງໜ່ວຍບໍລິການເມືອງງອຍ ທີ່ຂຶ້ນກັບສາຂາຫຼວງພະບາງ ແລະ ຈັດພິທີຂຶ້ນຕຶກອາຄານໃໝ່ ຂອງ ທຄຕລ ສາຂາສາລະວັນ.

ນອກຈາກນັ້ນ, ທຄຕລ ໄດ້ຮັບລາງວັນທະນາຄານດີເດັ່ນພາຍໃນ ປະຈໍາປີ 2017 (Domestic Retail Bank of The Year 2017), ຈັດກິດຈະກໍາຄືນກໍາໄລໃຫ້ແກ່ລູກຄ້າ 4 ໂປຼໂມຊັນຮ່ວມກັບ CUP ຄືນກໍາໄລໃຫ້ລູກຄ້າເຊິ່ງຜູ້ໂຊກດີລວມທັງໝົດ 24 ທ່ານຄື: ຜູ້ໂຊກດີຮັບແພັກເກັດ ໄປທ່ອງທ່ຽວປະເທດມາເລເຊຍ-ສິງກະໂປ 13 ທ່ານ, ຜູ້ໂຊກດີຮັບແພັກເກັດໄປເທດທ່ອງທ່ຽວມາເກົ໊າ-ຮ່ອງກົງ 06 ທ່ານ, ຜູ້ໃຊ້ບໍລິການຫຼາຍທີ່ສຸດ (Top spender) ໄດ້ຮັບ IPhone 7

ຈຳນວນ 05 ທ່ານ ແລະ ຕັ້ງບູດໂຄສະນາໃນງານວາງສະແດງ ຊັບສິນທາງປັນຍາ ແລະ ໃນທ້າຍປີ ທຄຕລ ໄດ້ຮັບລາງວັນທະນາຄານດີເດັ່ນດ້ານການດຳເນີນງານ, ວຽກງານການໂອນເງິນລະຫວ່າງປະເທດ ປະຈຳປີ 2016 (Operational Excellence Award) ຕາງໜ້າມອບໂດຍທະນາຄານ Wells Fargo ສະຖາບັນການເງິນທີ່ໃຫຍ່ທີ່ສຸດອັນດັບ 5 ຂອງປະເທດອາເມລິກາ.

## 6. ການເຄື່ອນໄຫວຂອງສະພາບໍລິຫານ, ຄະນະອຳນວຍການ ແລະ ຄະນະກຳມະການອື່ນໆ.

➢ **ສະພາບໍລິຫານ**

ໃນ 1 ປີທີ່ຜ່ານມາ ໄດ້ເປີດກອງປະຊຸມເພື່ອຄົ້ນຄວ້າ ແລະ ຮັບຮອງບັນຫາສຳຄັນເຊັ່ນ:

- ຮັບຮອງແຜນການຈຳໜ່າຍເພີ້ມທຶນ, ເປົ້າໝາຍການນຳໃຊ້ທຶນ, ຮັບຮອງບໍລິສັດລາວຈີນ ເປັນຜູ້ຄ້ຳປະກັນການຈຳໜ່າຍຮຸ້ນເພີ້ມທຶນ ແລະ ຮັບຮອງເອົາບໍລິສັດລາວລໍ ເປັນບໍລິສັດທີ່ປຶກສາດ້ານກົດໝາຍ ໃນການຈຳໜ່າຍຮຸ້ນເພີ້ມທຶນ.
- ຮັບຮອງຄົ້ນຄວ້າເປົ້າໝາຍສະມາຊິກສະພາບໍລິຫານຊຸດໃໝ່ ແລະ ຄະນະກຳມະການກວດສອບສະພາບໍລິຫານ, ຜູ້ຖືຮຸ້ນ ທຄຕລ ຊຸດໃໝ່.
- ຮັບຮອງຜົນການດຳເນີນທຸລະກິດຂອງ ທຄຕລ ປີ 2016 ແລະ ຮັບຮອງເອົາຫຼັກການ ການແບ່ງປັນກຳໄລຫຼັງອາກອນເພື່ອຈ່າຍເງິນປັນຜົນ 50 ສ່ວນຮ້ອຍ ແລະ ແບ່ງເຂົ້າຄັງຕ່າງໆ 50 ສ່ວນຮ້ອຍ.
- ຮັບຮອງ ແລະ ກຳນົດມື້ປິດບັນຊີຜູ້ຖືຮຸ້ນ, ມື້ເປີດກອງປະຊຸມຜູ້ຖືຮຸ້ນ ແລະ ກຳນົດມື້ປັນຜົນ ປະຈຳປີ 2016.
- ຮັບຮອງເອົາຜົນການກວດສອບຖານະການເງິນ ທຄຕລ ປະຈຳປີ 2016 ແລະ ປະຈຳ 06 ເດືອນຕົ້ນປີ 2017 ພາຍໃຕ້ມາດຖານລາວ ແລະ ມາດຖານສາກົນ.
- ຮັບຮອງກົດລະບຽບວ່າດ້ວຍການກຳນົດພາລະບົດບາດ, ສິດ ແລະ ໜ້າທີ່ຂອງ 5 ຄະນະກຳມະການທີ່ຂຶ້ນກັບສະພາບໍລິຫານ.
- ຮັບຮອງເອົາການດັດແກ້ກົດລະບຽບວ່າດ້ວຍການຈັດຊື້, ກໍ່ສ້າງ ແລະ ສ້ອມແປງຂອງ ທຄຕລ.
- ຮັບຮອງເອົາບໍລິສັດກວດສອບ E&Y ເປັນຜູ້ກວດສອບຖານະການເງິນ ທຄຕລ ປະຈຳປີ 2018.
- ຮັບຮອງການເພີ້ມທຶນຂອງ ທຄຕລ ຈາກ 682.888 ລ້ານກີບ ເປັນ 1.038.617 ລ້ານກີບ.
- ຮັບຮອງໃນທາງຫຼັກການກ່ຽວກັບການຫຼຸດສັດສ່ວນການຖືຮຸ້ນ ທຄຕລ ຢູ່ທະນາຄານລາວຝຣັ່ງ ຈາກ 46% ເຫຼືອ 30%.
- ຮັບຮອງບົດວິພາກເສດຖະກິດ ແລະ ຮັບຮອງການສ້າງຕັ້ງສາຂາໃໝ່ (ສາຂາໄຊເສດຖາ) ແລະ ລະບຽບຄຸ້ມຄອງສາຂາຂອງ ທຄຕລ.

➢ **ຄະນະກຳມະການຄຸ້ມຄອງບໍລິຫານ**

ໃນປີ 2017 ຄະນະກຳມະການໄດ້ເອົາໃຈໃສ່ຄົ້ນຄວ້າຕິດຕາມຜົນການດຳເນີນທຸລະກິດຂອງ ທຄຕລ ແຕ່ລະໄລຍະ, ໄດ້ຕິດຕາມບັນຫາສະພາບຄ່ອງການບໍລິຫານທຶນຂອງ ທຄຕລ ແລະ ໃຫ້ທິດຊີ້ນຳໃນການດຳເນີນງານຂອງ ທຄຕລ ແຕ່ລະດ້ານຢ່າງມີປະສິດທິຜົນເຊັ່ນ: ຕິດຕາມການພັດທະນາບຸກຄະລາກອນ ແລະ ຕິດຕາມການຄົ້ນຄວ້າລາຍຊື່ສະພາບໍລິຫານຊຸດໃໝ່, ຕິດຕາມການລະດົມເງິນຝາກ ໂດຍຕັ້ງຄະນະກຳມະການຄົ້ນຄວ້າການລະດົມທຶນຜ່ານຫຼາຍວິທີການຜ່ານຫຼາຍຊ່ອງທາງຄື: ການໂຄສະນາ, ກຳນົດອັດຕາດອກເບ້ຍ, ຕິດຕາມວຽກງານບໍລິຫານສິນເຊື່ອ ໂດຍສະເພາະຕິດຕາມ

ລາຍການລູກຄ້າລາຍໃຫຍ່, ຄຸ້ມຄອງ NPL ໃຫ້ຢູ່ໃນລະດັບທີ່ເໝາະສົມ, ຕິດຕາມການຄົ້ນຄວ້າ ພິຈາລະນາຮັບຮອງຂໍ້ມູນຕ່າງໆໃນແຜນການ 2018 ເພື່ອນຳສະເໜີສະພາບໍລິຫານ, ຕິດຕາມການດຳເນີນງານຂອງບັນດາບໍລິສັດໃນເຄືອ ແລະ ໄດ້ທວງເງິນປັນຜົນກຳໄລສະສົມຈາກແຕ່ລະພາກສ່ວນ, ຕິດຕາມການຄົ້ນຄວ້າການຂາຍຮຸ້ນ ທຄຕລ ທີ່ລັດຖະບານຈະຂາຍອອກ 19%, ສຶກສາລາຍລະອຽດຕໍ່ລະດັບຄວາມພຽງພໍຂອງທຶນ ທຄຕລ ທຽບໃສ່ມາດຕະຖານລາວ ແລະ ມາດຕະຖານສາກົນ.

ນອກນັ້ນ, ຍັງໄດ້ເອົາໃຈໃສ່ຕິດຕາມການປະຕິບັດໂຄງການແຜນຍຸດທະສາດໄລຍະຍາວ, ຄົ້ນຄວ້າພາລະບົດບາດຂອງບັນດາຄະນະກຳມະການ ທີ່ຂຶ້ນກັບສະພາບໍລິຫານເພື່ອນຳສະເໜີສະພາບໍລິຫານຮັບຮອງ, ຕິດຕາມການພັດທະນາບຸກຄະລາກອນ, ພັດທະນາຜະລິດຕະພັນຕ່າງໆ ຂອງ ທຄຕລ, ໄດ້ພິຈາລະນາການຄົ້ນຄວ້າແບ່ງປັນກຳໄລປີ 2017 ແລະ ການສ້າງຄັງຕ່າງໆ ເພື່ອນຳສະເໜີໃນກອງປະຊຸມສະພາບໍລິຫານພິຈາລະນາ ແລະ ພິຈາລະນາການເພີ່ມທຶນຈົດທະບຽນໃຫ້ທະນາຄານລາວຈີນ ເພື່ອນຳສະເໜີສະພາບໍລິຫານ. ພ້ອມກັນນັ້ນ, ກໍ່ຕິດຕາມການປະເມີນ KPI ສາຂາຕາມເງື່ອນໄຂທີ່ໄດ້ກຳນົດເມື່ອກ່ອນ ແລະ ຕິດຕາມການຄົ້ນຄວ້າ KPI ຂອງພະນັກງານ ບັນດາພະແນກ, ສູນ ສຳນັກງານໃຫຍ່ ທຄຕລ ແລະ ການກຳນົດຈັດຂັ້ນສາຂາ-ຫນ່ວຍບໍລິການ ຊຶ່ງການຈັດຕາມມາດຖານແຕ່ລະຂັ້ນແມ່ນອີງໃສ່ລາຍການເຄື່ອນໄຫວທຸລະກຳເງິນສົດ ແລະ ເງິນຝາກ.

ຄະນະກຳມະການໄດ້ຮັບຮອງເອົາການປັບປຸງລະບຽບການຕ່າງໆ: ການປັບປຸງລະບຽບລວມຂອງ ທຄຕລ, ການປັບປຸງລະບຽບຈັດຊື້-ກໍ່ສ້າງສ້ອມແປງ, ການປັບປຸງລະບຽບຄຸ້ມຄອງພາຫະນະ, ພາລະບົດບາດ, ສິດ ແລະ ໜ້າທີ່ຂອງຄະນະກຳມະການ ທີ່ຂຶ້ນກັບສະພາບໍລິຫານ ແລະ ໄດ້ຮັບຮອງເອົາປຶ້ມ Annual report 2016 ຂອງ ທຄຕລ.

- **ຄະນະກຳມະການບໍລິຫານຄວາມສ່ຽງ**

ທຄຕລ ໄດ້ສືບຕໍ່ເອົາໃຈໃສ່ຈັດຕັ້ງປະຕິບັດວຽກງານການຄຸ້ມຄອງຄວາມສ່ຽງໃຫ້ໄດ້ຮັບປະສິດທິຜົນເຊິ່ງສະແດງໃຫ້ເຫັນໄດ້ຈາກບັນດາວຽກງານທີ່ພົ້ນເດັ່ນເຊັ່ນ: ສັງລວມບັນດາຂໍ້ພົບເຫັນ ແລະ ຄວາມສ່ຽງຂອງ ທຄຕລ ໄລຍະປີ 2016 ທີ່ຜ່ານມາ ເພື່ອບັນທຶກລົງໃນເອກະສານບັນທຶກຄວາມສ່ຽງ (Cloud Computing Risk Log) ທີ່ຖືກສ້າງຂຶ້ນເພື່ອນຳໃຊ້ເປັນພື້ນຖານໃນການວິເຄາະຄວາມສ່ຽງ, ວິເຄາະຜົນກະທົບຈາກຄວາມສ່ຽງທັງພາຍໃນ ແລະ ພາຍນອກ ທີ່ອາດສົ່ງຜົນຕໍ່ການດຳເນີນທຸລະກິດຂອງທະນາຄານເຊັ່ນ: ຜົນກະທົບຈາກການໂຈລະກຳຂໍ້ມູນບັດເຄຣດິດຂອງລູກຄ້າ ທຄຕລ, ການນຳໃຊ້ເຄື່ອງຮູດບັດ EDC ໃນຮູບແບບອອບລາຍ (offline) ເພື່ອເຮັດການສໍ້ໂກງ ແລະ ອື່ນໆ, ຕິດຕາມຄວາມສ່ຽງດ້ານການຄຸ້ມຄອງສິນເຊື່ອຢ່າງໃກ້ຊິດ, ຄວາມສ່ຽງດ້ານສະພາບຄ່ອງ ແລະ ຄວາມສ່ຽງດ້ານການດຳເນີນງານ.

ນອກຈາກນັ້ນ, ກໍ່ໄດ້ປະເມີນທຸລະກຳທີ່ແຕ່ລະພະແນກ/ສູນ/ສາຂາ ບໍ່ປະຕິບັດຕາມລະບຽບບໍລິການ ເປັນປະຈຳທຸກໆເດືອນ ພ້ອມທັງເຮັດການສົມທຽບລະຫວ່າງ ຂໍ້ມູນທີ່ແຕ່ລະ ພະແນກ/ສູນ/ສາຂາ ລາຍງານເຖິງພາກສ່ວນຄຸ້ມຄອງຄວາມສ່ຽງ (ຜູ້ປ້ອງກັນແຖວທີ 02) ກັບ ບົດລາຍງານຂໍ້ພົບເຫັນຂອງພາກສ່ວນກວດກາ (ຜູ້ປ້ອງກັນແຖວທີ 03) ເພື່ອຮັບປະກັນຄວາມຖືກຕ້ອງຂອງການລາຍງານ, ຮ່າງນະໂຍບາຍຄຸ້ມຄອງຄວາມສ່ຽງຂອງ ທຄຕລ, ໄດ້ສຸມໃສ່ການຈັດຕັ້ງປະຕິບັດການຄຸ້ມຄອງຄວາມສ່ຽງທີ່ສອດຄ່ອງຕາມມາດຕະຖານສາກົນ ສະແດງໃຫ້ເຫັນໄດ້ຈາກການກະກຽມຄວາມພ້ອມໃນການຈັດຕັ້ງປະຕິບັດຕາມຫຼັກການ ບາເຊວ 2 ແລະ ໄດ້ສຳເລັດສ້າງແຜນດຳເນີນງານ ການຈັດຕັ້ງປະຕິບັດຕາມຫຼັກການ ບາເຊວ 2. ໃນນັ້ນ, ແຜນດຳເນີນງານໄດ້ແບ່ງການກະກຽມຄວາມພ້ອມໃນການຈັດຕັ້ງປະຕິບັດຕາມຫຼັກການ ບາເຊວ 2 ຂອງ ທຄຕລ ອອກເປັນ 03 ໄລຍະ. ຄົ້ນຄວ້າຮ່ວມກັບ ບໍລິສັດ E&Y ກ່ຽວກັບແຜນການຈັດຕັ້ງປະຕິບັດໂຄງການປັບປຸງຂັ້ນຕອນການອະນຸມັດສິນເຊື່ອໄປສູ່ຄວາມທັນສະໄໝ ໂດຍການໃຊ້ລະບົບ LOS (Loan Origination System)

ແລະ ສ້າງລະບົບຈັດອັນດັບສິນເຊື່ອ (Credit Rating System) ແລະ ຄົ້ນຄວ້າຄວາມສ່ຽງທີ່ຕິດພັນກັບຜະລິດຕະພັນທັງໝົດຂອງ ທຄຕລ.

➢ **ຄະນະກໍາມະການກວດສອບບັນຊີພາຍໃນ**

ໃນ 1 ປີຜ່ານມານີ້ ຄະນະກໍາມະການໄດ້ເອົາໃຈໃສ່ຕິດຕາມວຽກງານຕ່າງໆຊຶ່ງສາມາດປະຕິບັດໄດ້ເຊັ່ນ: ສໍາເລັດການກວດສອບຖານະການເງິນ ແລະ ເຊັນຮັບຮອງບົດລາຍງານການເງິນພາຍໃຕ້ມາດຕະຖານລາວ (LAS) ແລະ ມາດຕະຖານການລາຍງານການເງິນສາກົນ (IFRS) ປະຈໍາປີ 2016 ແລະ ການທົບທວນຖານະການເງິນປະຈໍາ 06 ເດືອນຕົ້ນປີ 2017 ຈາກຜູ້ກວດສອບພາຍນອກ (E&Y) ແລະ ເປີດເຜີຍບົດລາຍງານການເງິນອອກສູ່ມວນຊົນ.

ສໍາເລັດການກວດສອບຖານະການເງິນ ທຄຕລ ປະຈໍາປີ 2016 ຂອງອົງການກວດສອບແຫ່ງລັດ ແລະ ກົມຄຸ້ມຄອງທະນາຄານທຸລະກິດ ທະນາຄານແຫ່ງ ສປປ ລາວ, ພ້ອມກັນນັ້ນ, ທຄຕລ ສໍາເລັດການຄັດເລືອກບໍລິສັດກວດສອບພາຍນອກຂອງ ທຄຕລ ປະຈໍາປີ 2018. ຕິດຕາມການແກ້ໄຂຂໍ້ພົບເຫັນຂອງບັນດາພະແນກ/ສູນ ເຫັນວ່າສ່ວນຫລາຍແມ່ນສາມາດແກ້ໄຂໄດ້ ຍັງເຫຼືອບາງບັນຫາຄົງຄ້າງ ທີ່ຕ້ອງໄດ້ສືບຕໍ່ແກ້ໄຂ ຄື: ການເປີດບັນຊີຜິດປະເພດ, ການປັບປຸງ (update) ຂໍ້ມູນຂອງລູກຄ້າເງິນຝາກ ແລະ ສໍາເລັດການລົງກວດສອບຖານະການເງິນ ທຄຕລ ກ່ອນປິດບັນຊີປະຈໍາປີ 2017.

## 7. ການມອບພັນທະຕ່າງໆຂອງ ທຄຕລ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ໄດ້ມອບພັນທະອາກອນຕ່າງໆ ໃຫ້ແກ່ລັດຖະບານ ໃນປີ 2017 ເປັນຈໍານວນເງິນທັງໝົດ **110.665,71** ລ້ານກີບ ຊຶ່ງມີລາຍລະອຽດລຸ່ມນີ້:

| ລ/ດ | ເນື້ອໃນ | ຈໍານວນເງິນ (ຫົວໜ່ວຍລ້ານກີບ) |
|---|---|---|
| 1 | ອາກອນກໍາໄລ | 82.247,38 |
| 2 | ອາກອນມູນຄ່າເພີ້ມ 10% | 5.348,79 |
| 3 | ອາກອນລາຍໄດ້ພະນັກງານ | 22.492,29 |
| 4 | ອາກອນກໍາໄລນິຕິບຸກຄົນທັງພາຍໃນ ແລະ ຕ່າງປະເທດ 24% | 577,25 |
| **ລວມ** | | **110.665,71** |

## 8. ຜົນການດຳເນີນທຸລະກິດຂອງ ທຄຕລ ປະຈຳ ປີ 2017.

ໃນປີ 2017 ຜ່ານມາທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ສາມາດຈັດຕັ້ງປະຕິບັດແຜນທຸລະກິດໄດ້ ດັ່ງນີ້:

- ຍອດຊັບສິນ: ປະຕິບັດໄດ້ 35.886.113 ລ້ານກີບ, ເທົ່າກັບ 102 % ຂອງແຜນການປີ.
- ຍອດເງິນຝາກ: ປະຕິບັດໄດ້ 31.396.155 ລ້ານກີບ, ເທົ່າກັບ 106% ຂອງແຜນການປີ.
- ຍອດສິນເຊື່ອທັງໝົດ: ປະຕິບັດໄດ້ 22.586.284 ລ້ານກີບ, ເທົ່າກັບ 111 % ຂອງແຜນການປີ.
- ກຳໄລ/ຂາດທຶນ: ທຄຕລ ມີກຳໄລກ່ອນອາກອນ 364.022 ລ້ານກີບ, ທຽບໃສ່ແຜນການປີ ສາມາດປະຕິບັດໄດ້ລື່ນແຜນການ 46 %.

**ຜູ້ອຳນວຍການໃຫຍ່**
**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC

**ພູຂົງ ຈັນທະຈັກ**

**ໝາຍເຫດ: ສຳລັບຕົວເລກຜົນການດຳເນີນທຸລະກິດ ປະຈຳປີ 2017 ແມ່ນອີງຕາມເອກະສານລາຍງານການເງິນລວມກິດຈະການມາດຖານສາກົນ ຜ່ານການກວດສອບແລ້ວ.**